ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------

ແຂວງເຊກອງ

ພະແນກອຸດສາຫະກຳ ແລະ ການຄ້າ

ຄະນະກຳມະການປະມູນຊື້ - ຂາຍໄມ້ຢຶດ

ເລກທີ.098..../ພອຄ.ຊກ

ເຊກອງ,ວັນທີ.16.16.1.2020

# ແຈ້ງການ

**ເຖິງ: ອຳນວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີເນີເຈີໄມ້ສຳເລັດຮູບພາຍໃນແຂວງ,ຕ່າງແຂວງ.**

**ເລື່ອງ:** ເຊີນເຂົ້າຮ່ວມປະມູນຊື້ໄມ້ຢຶດຂອງລັດ ປະເພດໄມ້ໂລງເລ່ງແປຮູບ ຈຳນວນ 84,002 ມ$^3$ (ແປດສິບສີ່ ຈຸດ ສູນສູນສອງ ແມັດກ້ອນ).

**-ອີງຕາມ:** ຂໍ້ຕົກລົງຂອງລັດຖະມົນກະຊວງອຸດສາຫະກຳ ແລະ ການຄ້າ ,ສະບັບເລກທີ 0918/ອຄ.ກຈພງ ,ລົງວັນທີ 10 ກໍລະກົດ 2018:ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ,ນະຄອນຫຼວງ.

**-ອີງຕາມ:** ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ: 17/ນຍ, ລົງວັນທີ: 22/9/2008. ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດ.

**-ອີງຕາມ:** ຄຳສັ່ງແນະນາຂອງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າສະບັບເລກທີ 0336/ອຄ.ກຂອ , ລົງວັນທີ.13 ມີນາ 2017.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເຊກອງ ໃນນາມ (ຄະນະກຳມະການປະມູນຊື້ - ຂາຍໄມ້ຢຶດຂັ້ນແຂວງ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທຸລະກິດໄມ້, ໂຮງງານອຸດສາຫະກຳປຸງແຕ່ງໄມ້, ພາຍໃນແຂວງ ແລະ ຕ່າງແຂວງ ທົ່ວປະເທດ ເຂົ້າຮ່ວມປະມູນຊື້ໄມ້ຢຶດຂອງລັດ ທີ່ເຈົ້າໜ້າທີ່ລັດໄດ້ຢຶດຢູ່ໂຮງງານ ບ້ານງອນດອນ ເມືອງດາກຈຶງ ປະເພດໄມ້ໂລງເລ່ງ(ແປຮູບ) ຈຳນວນ **2.209 ຕັບ/ເສັ້ນ , ບໍລິມາດ 84,002 ມ$^3$**, (ແປດສິບສີ່ ຈຸດ ສູນສູນສອງ ແມັດກ້ອນ ) .

1. <u>ວ່າດ້ວຍເງື່ອນໄຂຜູ້ເຂົ້າຮ່ວມປະມູນ.</u>

1.3. ແມ່ນບໍລິສັດ/ໂຮງງານປຸງແຕ່ງໄມ້ທີ່ໄດ້ຜ່ານການດັດສົມ ແລະ ໄດ້ຮັບອະນຸຍາດດາເນີນທຸລະກິດການຜະລິດປຸງແຕ່ງໄມ້ທີ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປລາວ .

1.4. ມີໃບທະບຽນວິສາຫະກິດ, ມີໃບທະບຽນອາກອນ, ມີໃບອະນຸຍາດດຳເນີນກິດຈະການທຸລະກິດໄມ້ ແລະ ໃບອະນຸຍາດອື່ນໆ ທີ່ຖືກຕ້ອງຕາມລະບຽບການ ແລະ ເປັນໂຮງງານທີ່ບໍ່ເຄີຍກະທຳຜິດດ້ານທຸລະກິດໄມ້, ບໍ່ເຄີຍມີໜີ້ສິນຄ້າງສຳລະພັນທະໄມ້ກັບພາກລັດ.

2. <u>ວ່າດ້ວຍຖານະການເງິນຂອງຜູ້ທີ່ເຂົ້າຮ່ວມການປະມູນ.</u>

2.1.ຕ້ອງມີບັນຊີເງິນສົດ, ເຊັກສົດໃນການສຳລະຄ່າພັນທະໄມ້ ໂດຍໄດ້ຮັບການຢັ້ງຢືນ ຈາກທະນາຄານໃດໜຶ່ງວ່າມີເງິນແທ້ ແລະ ສາມາດຖອນເງິນໄດ້.

2.2 ໃນການເຂົ້າຮ່ວມການປະມູນຊື້ໄມ້ຜູ້ເຂົ້າປະມູນຕ້ອງສົ່ງຊອງປະມູນມາຍັງຄະນະກຳມະການປະມູນຊື້-ຂາຍ ໄມ້ຂັ້ນແຂວງຄື: ຊອງເງື່ອນໄຂ ແລະ ລາຄາປະມູນຊື້ໄມ້ຂອງໂຮງງານທີ່ເຂົ້າຮ່ວມການປະມູນ.

2.7. ໂຮງງານປຸງແຕ່ງໄມ້ ຫຼື ເຟີນິເຈີ ທີ່ຊະນະການປະມູນແມ່ນໃຫ້ປະສານສົມທົບກັບຄະນະກຳມະການປະມູນໄມ້ຂັ້ນແຂວງເພື່ອ,ຂໍພະນັກງານວິຊາການທີ່ກ່ຽວຂ້ອງຮ່ວມກັນລົງກວດກາໄມ້ຕົວຈິງ ຢູ່ສະໜາມ ແລ້ວມອບເງິນ 10% ເພື່ອຄໍ້າເພື່ອສັນຍາຊື້ - ຂາຍ ແລະ ຫຼັງຈາກນັ້ນຈິ່ງປະກອບເອກະສານ ຕາມລະບຽບການປະມູນຂອງລັດ, ພ້ອມທັງສຳລະຄ່າພັນທະໄມ້ໃຫ້ສຳເລັດຕາມກຳນົດເວລາ. ຖ້າຜູ້ຊະນະການປະມູນບໍ່ສາມາດປະຕິບັດໄດ້ຕາມທີ່ກ່າວມາຂ້າງເທິງນັ້ນແມ່ນມອບໃຫ້ຜູ້ປະມູນທີ່ໄດ້ອັນດັບທີ 02 ຫຼື ຜູ້ຖັດໄປ ເປັນຜູ້ຈັດຕັ້ງປະຕິບັດການເຊັນສັນຍາຊື້ - ຂາຍ ແລະ ມອບພັນທະໄມ້ແທນໂດຍບໍ່ມີການຕໍ່ລອງໃດໆທັງສິ້ນ.

2.8. ການປະມູນຊື້ - ຂາຍໄມ້ ແມ່ນໃຫ້ໃສ່ລາຄາປະມູນຊື້ຕາມລາຄາກາງທີ່ຄະນະກຳມະການໄດ້ກຳນົດໄວ້ໂດຍບໍ່ໃຫ້ເລືອກເອົາສະເພາະໄມ້ທີ່ທາງໂຮງງານຕ້ອງການຢ່າງເດັດຂາດ.

2.9. ໃນລາຄາປະມູນຂາຍໄມ້ ແມ່ນມີແຕ່ຄ່າພັນທະໄມ້ເທົ່ານັ້ນ ຍັງບໍ່ທັນໄດ້ບວກອາກອນຕ່າງໆ ເຂົ້ານຳ.

2.10. ລາຄາກາງໃນການປະມູນໄມ້ດັ່ງກ່າວ ແມ່ນກຳນົດຂຶ້ນເພື່ອເປັນການສົ່ງເສີມໃຫ້ນຳເອົາໄມ້ ໄປປຸງແຕ່ງເປັນຜະ ລິດຕະພັນສຳເລັດຮູບເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

3. **<u>ວ່າດ້ວຍວັນ, ເວລາ ແລະ ຄ່າຊອງປະມູນ.</u>**

3.5. ກຳນົດເວລາຂາຍຊອງປະມູນໄມ້ເລີ່ມແຕ່ວັນທີ: 16 /06/ 2020 ເຖິງວັນທີ: 30/06/ 2020.

3.6. ກຳນົດເປີດຊອງປະມູນໄມ້ ເວລາ: 08:30 ໂມງຂອງວັນທີ: 01 /07/ 2020.

3.7. ສະຖານທີ່: ຫ້ອງປະຊຸມພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງເຊກອງ.

3.8. ສຳລັບຊອງປະມູນໃຫ້ພົວພັນຊື້ໄດ້ທີ່ພະແນກອຸດສາຫະກຳ ແລະ ການຄ້າ(ຂະແໜງການນຳເຂົ້າ ແລະ ສົ່ງອອກສິນຄ້າ ), ໃນລາຄາຊອງລະ 300.000 ກີບ ( ສາມແສນກີບ ).

**+ ຕິດຕໍ່ພົວພັນ:**

ທ່ານ ນາງ ໄວສອນ ພົມມະສອນ 020 98318308 ແລະ ທ່ານ ສົມໃຊ ໄຊຍະສານ ໂທ 020 222 98810.

ດັ່ງນັ້ນ: ຈຶ່ງແຈ້ງມາຍັງທ່ານຜູ້ທີ່ມີຄວາມສົນໃຈຮັບຊາບ.

**ຫົວໜ້າ**

**ພະແນກອຸດສາຫະກຳ ແລະ ການຄ້າ**

(ຄະນະກຳມະການປະມູນຊື້ - ຂາຍໄມ້ປົດຂັ້ນແຂວງ)

ພະແນກ ອຸດສາຫະກຳແລະການຄ້າ ແຂວງ ເຊກອງ

ພັນສອນ ແສນສົ່ງເສີມ
Phansone SAENSONGSEUM

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

------------

ແຂວງເຊກອງ ເລກທີ.....028..../ພອຄ.ຊກ

ພະແນກອຸດສາຫະກຳ ແລະ ການຄ້າ

ຄະນະກຳມະການປະມູນຊື້-ຂາຍໄມ້ຢືດ

## ໃບແຈ້ງລາຄາ

## ພັນທະໄມ້ປະມູນ ແລະ ລາຄາຜູ້ເຂົ້າຮ່ວມປະມູນຊື້ໄມ້

**-ອີງຕາມ:** ຄຳສັ່ງແນະນຳຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະການຄ້າສະບັບເລກທີ 0336/ອຄ.ກຂອ ລົງວັນທີ. 13 ມິນາ 2017.

**-ອີງຕາມ:** ຂໍ້ຕົກລົງຂອງເຈົ້າແຂວງໆເຊກອງ ສະບັບເລກທີ 107/ຈຂ.ຊກ , ລົງວັນທີ 19/12/2016.

ຂ້າພະເຈົ້າຊື່ ແລະ ນາມສະກຸນ.......................................................................................

ອຳນວຍການ.....................................................................................................

ປະຈຸບັນຢູ່ບ້ານ.......................................ເມືອງ.........................ແຂວງ.......................................

**ຈຸດປະສົງ:**........................................................ຈາກຄະນະກຳມະການປະມູນຊື້ - ຂາຍໄມ້ຢືດ ຂອງແຂວງເຊກອງ ແລະ ທາງ ບໍລິສັດ/ໂຮງງານ ໄດ້ໃສ່ ລາຄາປະມູນຊື້ໄມ້ຢູ່ຂ້າງລຸ່ມນີ້:

**ຕາຕະລາງແຈ້ງພັນທະໄມ້ລາຍລະອຽດມີດັ່ງລຸ່ມນີ້.**

| ລ/ດ | ຊະນິດໄມ້ | ຈ/ນ | ຫົວໜ່ວຍ | ບໍລິມາດ | ລາຄາກາງ | ລາຄາປະມູນຊື້ |
|---|---|---|---|---|---|---|
| 1 | ໄມ້ໂລງເລັ່ງ (ແປຮູບ) | 2.209 | ຕັບ/ເສັ້ນ | 84,002 | 17.519.000 | |
| | | | | | | |
| | ລວມ | 2.209 | | 84,002 | | |

**ໝາຍເຫດ:** ລາຄາດັ່ງກ່າວແມ່ນລາຄາກາງກະຊວງອຸດສາຫະກຳ ແລະການຄ້າວາງອອກບໍ່ທັນໄດ້ລວມຄ່າອາກອນອື່ນໆເຂົ້ານຳ

ດັ່ງນັ້ນ,ຄະນະກຳມະການປະມູນຊື້ - ຂາຍໄມ້ຢືດ ຂັ້ນແຂວງ ຈຶ່ງແຈ້ງລາຄາພັນທະໄມ້ ມາຍັງໂຮງງານປຸງແຕ່ງໄມ້, ຫົວໜ່ວຍທຸລະກິດໄມ້,ນຳເອົາໃບແຈ້ງລາຄາໄປປະກອບໃຫ້ຄົບຖ້ວນ, ແລ້ວນຳມາມອບໃຫ້ຄະນະກຳມະການໃນມື້ເປີດຊອງປະມູນ.

ເຊກອງ,ວັນທີ...................... ເຊກອງ,ວັນທີ......................

**ຢັ້ງຢືນ ແລະ ຮັບຮູ້ຈາກ**

**ຫົວໜ້າພະແນກອຸດສາຫະກຳ ແລະການຄ້າ**

(ຄະນະກຳມະການຊື້-ຂາຍໄມ້ຢືດຂັ້ນແຂວງ)

**ຜູ້ສະເໜີເຂົ້າຮ່ວມປະມູນຊື້ໄມ້**

ກະຊວງອຸດສາຫະກຳແລະການຄ້າ ພະແນກ ອຸດສາຫະກຳແລະການຄ້າ ແຂວງ ເຊກອງ

ພັນສອນ ແສນສົ່ງເສີມ

Phansone SAENSONGSEUM